# ບົດທີ 7

# ວັນເພັນເຕຄໍສະເຕ ທີ່ພະວິນຍານບໍລິສຸດລົງມາ




**1** ພະທຳກິດຈະການກ່າວເລື່ອງສະໄໝທີ່ພະເຢຊູຄືນມາຈາກຕາຍແລ້ວ.

ກ. ພະທຳກິດຈະການເລີ້ມຕົ້ນກັບຄຼິດສະຕະຈັກໃນກຸງໃດ? ______________________

ຂ. ກ່າວເລື່ອງການປ່າວປະກາດໃນກຸງນັ້ນຈົນເຖິງບົດໃດ? ______________________

**2** ໃຫ້ອ່ານ ກິດຈະການ 1:4 ອີກ.

ກ. ພະອົງສັ່ງພວກສາວົກບໍ່ໃຫ້ອອກຈາກກຸງເຢລູຊາເລັມ ແຕ່ໃຫ້ຄອຍຮັບຕາມພະສັນຍາຂອງພະບິດາຄືໃຫ້ຄອຍໃຜ ມາ? ______________________________________

ຂ. ໃນ ກິດຈະການ 2:32-33 ເປໂຕບອກວ່າ ພະເຢຊູຊົງຄືນຈາກຕາຍ ຊົງຖືກຍົກຂຶ້ນຢູ່ກັບພະເຈົ້າໄດ້ຊົງຮັບຕາມ ພະ ສັນຍາຂອງພະບິດາຖອກລົງມາດັ່ງພວກລູກສິດຂອງພະອົງນັ້ນ. ເຂົາຮັບຄຳສັນຍາໃດ? ______________________________________

**3** ໃຫ້ອ່ານ ກິດຈະການ 2:1-4 ທີ່ບັນລະຍາຍເລື່ອງເຫດການນັ້ນ.

ກ. ພວກຜູ້ທີ່ເຊື່ອຮັບຫຍັງ? ____________________

ຂ. ເຂົາຮັບພະວິນຍານບໍລິສຸດເຖິງຂະໜາດໃດ? ____ ______________________________________



ຄ. ມີສຽງຢ່າງໃດ? __________________________

ງ. ພະວິນຍານລົງມາໂດຍມີຮູບຢ່າງໃດ? ________ ______________________________________

ຈ. ເຂົາເລີ່ມຕົ້ນປາກຢ່າງໃດ? ________________

ສ. ການນັ້ນ ເກີດມີມາໃນເວລາເທດສະການໃດ ____ ______________________________________

ຊ. ຫຼັງຈາກການຄືນພະຊົນຈັກມື້? _____________

ຍ. ຫຼັງຈາກການສະເດັດສູ່ສະຫວັນຈັກມື້? ________

**4** ຕໍ່ໄປນີ້ເຮົາຈະຮຽນເລື່ອງລັກສະນະຂອງພະອົງທີ່ລົງມານັ້ນຄື ພະວິນຍານບໍລິສຸດ. ໃຫ້ອ່ານຈາກ ກິດຈະການ 5:3-4

ກ. ໃນຂໍ້ 3 ເຫັນວ່າອານາເນຍຕົວະໃຜ? ______________________________________

ຂ. ຂໍ້ 4 ຕົວະຕໍ່ໃຜ? ____________________________________________________

**5** ດັ່ງນັ້ນ ເຫັນວ່າຄໍາຕົວະຕໍ່ພະວິນຍານເປັນອັນດຽວກັນກັບຄໍາຕົວະຕໍ່ໃຜ _______________

**6** ເຫັນວ່າ ພະວິນຍານບໍລິສຸດເປັນພະເຈົ້າ. ເປັນພະພາກໜຶ່ງໃນຕີເອກອະນຸພາບ ແລະເປັນ ອັນໜຶ່ງອັນດຽວກັນກັບ ພະບິ ດາແລະພະບຸດ. ໃນ 1 ໂກລິນໂທ ເຫັນຄໍາວ່າເປັນພະວິນຍານ ຂອງ _______________ .(ຕື່ມຄວາມຂາດ)

**7** ກ. ສ່ວນຜູ້ທີ່ລ້ຽງຜີ ເຂົາລ້ຽງຜີຫຍັງ? (ເລືອກ)

______ ຜີສັດຕາຍ ______ ຜີຄົນຕາຍ ______ ຜີດອກໄມ້

ຂ. ແຕ່ພະວິນຍານບໍລິສຸດ ເປັນພະວິນຍານຂອງໃຜ? ___________________________

**8** ກ. ແມ່ນໃຜເປັນຜູ້ສ້າງໂລກ ສ້າງເທວະດາ ສ້າງຜີຮ້າຍກ່ອນທີ່ບໍ່ໄດ້ໄລ່ອອກຈາກຟ້າສະຫວັນ? ____________________________________________________________

ຂ. ແມ່ນພະວິນຍານໃດທີ່ບໍ່ມີກົກບໍ່ມີປາຍ? __________________________________

ຄ. ຄືເປັນພະວິນຍານຂອງໃຜ? ____________________________________________

**9** ຂໍ້ພະຄໍາພີຕໍ່ໄປນີ້ກ່າວເລື່ອງລັກສະນະແລະພາລະຂອງພະວິນຍານບໍລິສຸດ. ໃຫ້ທ່ານເປີດອ່ານຂໍ້ພະຄໍາພີເຫຼົ່ານັ້ນແລ້ວຈັບຄູ່ກັບລັກສະນະຂອງພະອົງຢູ່ຂ້າງຂວາ.

| | | |
|---|---|---|
| 1 ກລທ 2:13 | ກ. _______________ | ຮູ້ພະທໍາຂອງພະເຈົ້າ. |
| 1 ກລທ 2:11 | ຂ. _______________ | ປະທານຂອງພະລາຊະທານ. |
| 1 ກລທ 12:11 | ຄ. _______________ | ສັ່ງສອນ. |
| ກຈກ 5:32 | ງ. _______________ | ໃຊ້ລູກສິດໄປ. |
| ກຈກ 10:19 | ຈ. _______________ | ຊົງກ່າວ. |
| ກຈກ 13:4 | ສ. _______________ | ຊົງເປັນພະຍານ. |
| ກຈກ 16:6-7 | ຊ. _______________ | ຕັ້ງພວກຜູ້ດູແລ. |
| ກຈກ 20:28 | ຍ. _______________ | ຊົງຫ້າມ (ບໍ່ອະນຸຍາດ) |

**10** ໃນຊ່ອງຫວ່າງຕໍ່ໄປນີ້ ໃຫ້ທ່ານຈົດພາລະຂອງພະວິນຍານບໍລິສຸດທີ່ຮຽນມາໃນຄໍາຖາມຜ່ານມາແລ້ວ. (ຢ່າກັບໄປເບິ່ງ ຖ້າບໍ່ຈື່ 5 ປະການໃຫ້ກັບໄປຮຽນຄືນຈົນກວ່າຈື່ໄດ້)

_______________________________ _______________________________

_______________________________ _______________________________

_______________________________

**11** ອໍານາດຂອງພະວິນຍານເປັນຢ່າງໜຶ່ງ ພະລັງງານທໍາມະຊາດກໍເປັນອີກຢ່າງໜຶ່ງຕ່າງຫາກ. ໃນແຕ່ລະຂໍ້ຕໍ່ໄປນີ້ໃຫ້ທ່ານໝາຍ √ ຂ້າງຄໍາໃດທີ່ອ້າງເຖິງການຂອງພະວິນຍານບໍລິສຸດ.

| | |
|---|---|
| ກ. ______ ຮູ້ | ຂ. ______ ປະທານຂອງພະລາຊະທານ |
| ຄ. ______ ສອນ | ງ. ______ ເປັນພະຍານ |
| ຈ. ______ ກ່າວ | ສ. ______ ຕັ້ງພວກຜູ້ດູແລ |
| ຊ. ______ ໃຊ້ຄົນໄປ | ຍ. ______ ຫ້າມ |

*ທີ່ພະວິນຍານບໍລິສຸດ ສາມາດສອນ ສາມາດຮູ້ ສາມາດກ່າວ ໆລໆ ນັ້ນ ສະແດງວ່າເປັນບຸກຄະລິກລັກສະນະຢ່າງແທ້ຈິງ.*

**12** ກ. ພະລັງງານໄຟຟ້າ ສອນ ກ່າວ ຮູ້ ໄດ້ບໍ່? _______________________________

ຂ. ພະລັງງານຖ່ວງດຶງ ສອນ ກ່າວ ຮູ້ ໄດ້ບໍ່? _______________________________

ຄ. ພະລັງງານເຫຼັກກ້າ ສອນ ກ່າວ ຮູ້ ໄດ້ບໍ່? _______________________________

**13** ທີ່ພະວິນຍານບໍລິສຸດສາມາດ ຮູ້ ສອນ ກ່າວ ໆລໆ ໄດ້ ເປັນຫຼັກຖານວ່າ ພະວິນຍານບໍ່ແມ່ນພຽງແຕ່ພະລັງງານ ຊື່ໆ ແຕ່ເປັນບຸກຄະລິກພາບຢູ່ດ້ວຍ. ມີພະລັງງານສາມປະການໃດທີ່ບໍ່ແມ່ນບຸກຄະລິກພາບ?

___________________ ___________________ ___________________

**14** ໃຫ້ທ່ານຈົດຢ່າງນ້ອຍ 5 ປະການທີ່ພະວິນຍານສາມາດເຮັດໄດ້ຊຶ່ງສະແດງວ່າເປັນບຸກຄະລິກພາບ?

______________________________ ______________________________

______________________________ ______________________________

______________________________

**15** ພະວິນຍານບໍລິສຸດຕ່າງກັນກັບວິນຍານອື່ນ ໆ ໃນໂລກເພາະເປັນວິນຍານໃດ? __________

**16** ໃນຂໍ້ພະຄຳພີ 4 ຂໍ້ນີ້: ມລກ 3:29 ກຈກ 5:3 ກຈກ 5:9 ອຟຊ 4:30

ກ. ຂໍ້ໃດສະແດງວ່າມະນຸດສາມາດຕົວະຕໍ່ພະວິນຍານໄດ້? ______________________

ຂ. ຂໍ້ໃດສະແດງວ່າເຮົາທົດລອງພະວິນຍານໄດ້? ____________________________

ຄ. ພະວິນຍານບໍລິສຸດເສຍພະໄທໄດ້? ____________________________________

ງ. ຄົນເຮົາກ່າວຄຳໝິ່ນປະ ມາດຕໍ່ພະວິນຍານໄດ້? ___________________________

**17** ພະລັງງານທຳມະຊາດ ບໍ່ສາມາດສອນ ບໍ່ສາມາດກ່າວ ໆ ລ ໆ. ມະນຸດເຮັດໃຫ້ໄຟຟ້າເສຍໃຈບໍ່ໄດ້ ຕົວະຕໍ່ເຫຼັກກ້າບໍ່ ໄດ້ ກ່າວຄຳໝິ່ນປະໝາດຕໍ່ຄວາມຖ່ວງດຶງກໍບໍ່ໄດ້ ແຕ່ສາມາດຕົວະແລະໝິ່ນປະມາດຕໍ່ໃຜໄດ້? (ເລືອກ)

ກ. _____ ພະວິນຍານບໍລິສຸດ ຂ. _____ ພະລັງງານໄຟຟ້າ ຄ. _____ ເຫຼັກກ້າ

**18** ໃນແຕ່ລະຂໍ້ຕໍ່ໄປນີ້ໃຫ້ທ່ານໝາຍ √ ໃສ່ຂ້າງປະໂຫຍກທີ່ຖືກ.

ກ. ________ ເຮົາສາມາດຕົວະຕໍ່ພະວິນຍານໄດ້

ຂ. ________ ເຮົາສາມາດຕົວະຕໍ່ພະລັງງານໄດ້

ຄ. ________ ເຮົາສາມາດທົດລອງພະວິນຍານໄດ້

ງ. ________ ທົດລອງດິນຟ້າອາກາດໄດ້

ຈ. ________ ເຮັດໃຫ້ພະວິນຍານບໍລິສຸດເສຍໃຈໄດ້

ສ. ________ ເຮັດໃຫ້ໄຟຟ້າເສຍໃຈໄດ້

ຊ. ________ ກ່າວຄຳໝິ່ນປະ ມາດພະວິນຍານໄດ້

ຍ. ________ ກ່າວຄຳໝິ່ນປະ ມາດຕໍ່ຄວາມຖ່ວງດຶງໄດ້

**19** ແນ່ນອນວ່າເຮົາເຮັດຫຍັງຕໍ່ພະລັງງານທຳມະຊາດບໍ່ໄດ້ເພາະບໍ່ແມ່ນບຸກຄະລິກພາບ ຄືບໍ່ມີບຸກຄະລິກລັກສະນະ ແຕ່ ສ່ວນ ພະວິນຍານບໍລິສຸດ ພະອົງຮູ້ຄິດ ຮູ້ຈັກ ໆລໆ.
ໃຫ້ທ່ານຍົກພະລັງງານຢ່າງນ້ອຍສອງປະການທີ່ບໍ່ແມ່ນບຸກຄະ ລິກພາບ

______________________________ ______________________________

**20** ໃຫ້ທ່ານຈົດສິ່ງທີ່ມະນຸດເຮົາສາມາດເຮັດຕໍ່ພະວິນຍານບໍລິສຸດໄດ້. (ຢ່າງນ້ອຍ 3 ປະການ)

____________________ ____________________ ____________________

**21** ໃຫ້ທ່ານຈົດສິ່ງທີ່ພະວິນຍານກະທຳໄດ້ຊຶ່ງສະແດງວ່າເປັນບຸກຄະລິກພາບຢ່າງນ້ອຍ 5 ປະການ.

_______________________________ _______________________________

_______________________________ _______________________________

_______________________________

_ *ດັ່ງນັ້ນ ເທື່ອໃດທີ່ທ່ານຈະອ້າງເຖິງພະວິນຍານບໍລິສຸດ ຢ່າຖືວ່າເປັນສິ່ງຂອງຫຼືເປັນແຕ່ພະລັງງານຢ່າງດຽວເພາະພະວິນ ຍານນັ້ນເປັນບຸກຄະລິກພາບພະຜູ້ເປັນເຈົ້າ.*

**22** ພະວິນຍານບໍລິສຸດກັບພະວິນຍານອື່ນໆ ມີສ່ວນແຕກຕ່າງກັນຢ່າງໃດ? ______________

_________________________________________________________________

**23** ພວກເຮົາຮຽນຮູ້ມາແລ້ວວ່າ ພະວິນຍານບໍລິສຸດເປັນພະວິນຍານຂອງພະເຈົ້າ ທັງເປັນບຸກຄະລິກພາບຂອງພະເຈົ້າ. ພະຄຳພີຍົກຕົວຢ່າງຫຼາຍປະການເພື່ອບັນລະຍາຍພະວິນຍານບໍລິສຸດ. ໃນແຕ່ລະຂໍ້ຕໍ່ໄປນີ້ ມີຕົວຢາງຂອງພະວິນຍານບໍລິສຸດ 4 ຢ່າງ ໃຫ້ທ່ານຈັບຄຳເຫຼົ່ານັ້ນເປັນຄູ່ກັບຂໍ້ພະຄຳພີ ຂ້າງຂວາ.

ຕົວຢ່າງ:



| | |
|---|---|
| ກ. ປະທັບຕາ | ________ ກິດຈະການ 2:1-2 |
| ຂ. ໄຟ | ________ ໂຢຮັນ 7:37-39 |
| ຄ. ນ້ຳ | ________ ມັດທາຍ 3:11 |
| ງ. ລົມ | ________ ເອເຟໂຊ 1:13 |

**24** ເຮົາຈະຮຽນຮູ້ເລື່ອງໄຟກ່ອນ

ກ. ໃນພະຄຳພີເດີມມາລາກີ 3:2-3 ພະອົງຈະມາເໝືອນໄຟໃດ? __________________

ຂ. ໃນພະທຳພະນິມິດ 3:18 ຄຳນັ້ນຈະໄດ້ຫຼອມໂດຍຫຍັງ? _______________________

ຄ. ໄຟໃນຂໍ້ພະຄຳພີເຫຼົ່ານັ້ນ ເຮັດຫຍັງ? (ເລືອກ)

______ ທຳລາຍ ______ ເຮັດໃຫ້ຮ້ອນ ______ ທຳໃຫ້ບໍລິສຸດ

**25** ກ. ໃນ ມທ 3:11 ໂຢຮັນບອກວ່າ ພະເຢຊູຈະໃຫ້ຮັບບັບຕິສະມາດ້ວຍພະວິນຍານບໍລິສຸດແລະດ້ວຍຫຍັງອີກ? ______________________________________________

ຂ. ໝາຍຄວາມວ່າ ໃຜຈະຊຳລະຈິດໃຈຂອງມະນຸດ? ___________________________

**26** ທີ່ພະວິນຍານຮັບພາລະໃນການຊຳລະຈິດໃຈຂອງເຮົາປຽບດ້ວຍສັນຍາລັກຫຍັງ? ________

**27** ໃນໂຢຮັນ 7:37-39 ທີ່ເຫັນຍົກສັນຍາລັກພະວິນຍານບໍລິສຸດອີກປະການໜຶ່ງ.

ກ. ພະເຢຊູຮ້ອງວ່າ ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາແລະເຮັດຫຍັງ? ___________________

ຂ. ມີຫຍັງທີ່ຈະໄຫຼອອກຈາກກາຍໃນຜູ້ນັ້ນ? ___________________________________

ຄ. ໃນຂໍ້ 39 ສິ່ງທີ່ພະເຢຊູຊົງກ່າວນັ້ນໝາຍເຖິງໃຜ? ___________________________

**28** ໃນໂຢຮັນ 4:10 ພະອົງຈະຍົກນ້ຳຢ່າງໃດໃຫ້ຍິງຊາວຊາມາເລຍ? ____________________

**29** ກ. ໃນໂຢຮັນ 4:13-14 ເຫັນວ່າຄົນທີ່ກິນຈາກນ້ຳສ້າງຈະຢາກອີກບໍ່? _________________

ຂ. ແຕ່ຜູ້ທີ່ກິນຈາກນ້ຳອັນປະກອບດ້ວຍຊີວິດຈະຢາກອີກບໍ່? _______________________

**30** ໃຫ້ເປີດອ່ານ ເອຊາຢາ 44:3 ແລະຕື່ມຄວາມທີ່ຂາດດັ່ງຕໍ່ໄປນີ້: “ເຮົາຈະເທ ______ ລົງເທິງແຜ່ນດິນທີ່ແຫ້ງແລ້ງ ແລະ ເຮັດໃຫ້ ______ ໄຫຼໄປໃນຖິ່ນກັນດານ ຈະເທອຳນາດບໍລິສຸດຂອງເຮົາລົງເທິງລູກຫຼານເຈົ້າ...”

**31** ໃນຂໍ້ພະຄຳພີເຫຼົ່ານັ້ນທີ່ອ້າງເຖິງການທີ່ວນ້ຳ ນ້ຳນັ້ນປຽບທຽບພະວິນຍານບໍລິສຸດໃນດ້ານໃດເປັນຕົ້ນ? (ເລືອກປະການໜຶ່ງ)

ກ. ພະວິນຍານໃຫ້ມີຄວາມຊູໃຈ

ຂ. ພະວິນຍານເຮັດໃຫ້ມີນ້ຳຖ້ວມ

ຄ. ພະວິນຍານຢາກນ້ຳ

**32** ໃນເວລາໃດທີ່ເຮົາຕາກແດດມາດົນເຮົາຢາກນ້ຳ ກິນນ້ຳເຢັນແລ້ວຊື່ນໃຈດີ. ນ້ຳເຢັນຊື່ນ ໃຈຄົນທີ່ຫິວ ເຊັ່ນດຽວກັນ ພະວິນຍານບໍລິສຸດ __________ ຄົນທີ່ສະແຫວງຫາພະອົງ. (ຕື່ມຄວາມ)

**33** ໃຫ້ທ່ານຂຽນ ສັນຍາລັກທັງສອງປະການທີ່ເຮົາຮຽນມາແລ້ວ ຊຶ່ງປຽບທຽບພະວິນຍານບໍລິສຸດ.

________________________________ ________________________________

**34** ປະການທີ 3 ທີ່ປຽບທຽບພະວິນຍານຂອງພະເຈົ້າຄື ລົມ

ກ. ໃນ ກຈກ 1:8 ພະອົງສັນຍາວ່າ ພວກລູກສິດຂອງພະອົງຈະໄດ້ຮັບພະລາຊະທານຫຍັງ?

_________________________________________________________________

ຂ. ໃຫ້ອ່ານ ກຈກ 2:2 ເມື່ອພະວິນຍານສະເດັດມາ ມີສຽງໃດມາຈາກຟ້າ? ____________

ຄ. ແມ່ນສັນຍາລັກໃດທີ່ປຽບທຽບກັບອຳນາດຂອງພະວິນຍານ? ___________________

**35** ໃນໂຢຮັນ 20:21 ເຫັນວ່າ ພະບິດາໄດ້ຊົງໃຊ້ພະອົງຢ່າງໃດ ພະອົງກໍໃຊ້ພວກລູກສິດໄປຢ່າງນັ້ນ. ໃນບົດດຽວຂໍ້ 22 ນັ້ນ

ກ. ພະອົງຊົງລະບາຍຫຍັງໃສ່ເຂົາ? ________________________________________

ຂ. ພະອົງບອກວ່າເຂົາຈົ່ງຮັບຫຍັງ? ________________________________________

ຄ. ພະອົງໃຊ້ຫຍັງປຽບທຽບອຳນາດຂອງພະວິນຍານ? __________________________

**36** ໃນໂຢຮັນ 3:8 ພະອົງຍົກສິ່ງໃດມາປຽບທຽບກັບການບັງເກີດຈາກພະວິນຍານ? _________

**37** ມາເຖິງນີ້ ເຮົາໄດ້ຮຽນເລື່ອງ 3 ຢ່າງທີ່ປຽບທຽບພະວິນຍານບໍລິສຸດ.

ໃຫ້ທ່ານຈົດທັງ 3 ຢ່າງນັ້ນໄວ້

___________________ ____________________ ____________________

**38** ຍັງມີອີກຢ່າງໜຶ່ງທີ່ປຽບທຽບພະວິນຍານໃນພະຄໍາພີຄື ຕາປະທັບ. ຕາປະທັບນັ້ນເປັນທີ່ຮັບປະກັນວ່າ ເອກກະສານນັ້ນ ເປັນສິ່ງທີ່ຈິງແທ້. ອາດຈະເປັນເອກກະສານຂອງລັດ ຫຼືອາດຈະເປັນໃບສະນິຍະບັດຈາກໂຮງຮຽນກໍໄດ້. ຕາປະທັບນັ້ນຮັບປະກັນຢ່າງໃດ? (ເລືອກ)

ກ. ເປັນຂອງປອມ ຂ. ເປັນຄວາມຕົວະ ຄ. ເປັນຂອງຈິງ



**39** ທີ່ພະຄໍາພີສອນວ່າ ພະວິນຍານບໍລິສຸດຄື ຕາປະທັບໝາຍຄວາມວ່າ ພະວິນຍານຮັບ __________ ວ່າເຮົາເກີດມາໃນ ຄອບຄົວຂອງພະເຈົ້າ. (ຕື່ມຄວາມທີ່ຂາດ)

**40** ໃນເມື່ອເຮົາຈະຝາກສິ່ງຂອງທາງໄປສະນີ ທີ່ເຮົາຈະປະທັບຕານັ້ນຮັບປະກັນວ່າສິ່ງຂອງໃນຫໍ່ຍັງໂດຍບໍ່ມີໃຜເປີດເຫື່ອ. ຕາປະທັບຮັບປະກັນຢ່າງໃດ? (ເລືອກ)

ກ. ສິ່ງຂອງນັ້ນເສຍຫາຍແລ້ວ

ຂ. ສິ່ງຂອງນັ້ນຍັງປອດໄພ

ຄ. ມີຄົນລັກເອົາແລ້ວ

**41** ທີ່ພະວິນຍານປະທັບຕາເຮົາໄວ້ແລ້ວໝາຍຄວາມວ່າ ພະວິນຍານຮັບ _________ ວ່າຄົນນັ້ນຢູ່ຢ່າງປອດໄພໃນຄອບ ຄົວຂອງພະເຈົ້າ. (ຕື່ມຄວາມຂາດ)

**42** ໃຫ້ອ່ານ ເອເຟໂຊ 4:30.

ກ. ໃນຂໍ້ນັ້ນ ເຫັນວ່າພະວິນຍານຊົງປະທັບຕາເຮົາໄວ້ເພື່ອວັນໃດ?

______________________________________________

ຂ. ທີ່ພະວິນຍານບໍລິສຸດ ຈະຮັບປະກັນພວກໃດໄວ້ຈົນກວ່າວັນໄດ້ພົ້ນ?

______________________________________________

**43** ມີທັງໝົດ 4 ຢ່າງໃດທີ່ພະຄໍາພີໃຊ້ມາເປັນສັນຍາລັກພະວິນຍານບໍລິສຸດ?

______________________ ______________________

______________________ ______________________

**44** ກ. ສັນຍາລັກໃດປຽບເຖິງອໍານາດ? ______________________

ຂ. ສັນຍາລັກໃດເພື່ອຄົນທີ່ຫິວດ້ານວິນຍານ? ______________________

ຄ. ອັນໃດເພື່ອການຊໍາລະ? ______________________

ງ. ອັນໃດຮັບປະກັນຢ່າງປອດໄພ? ______________________

*ຂອບໃຈພະເຈົ້າທີ່ພະວິນຍານຢູ່ນໍາພວກຄູ່ດສະຕຽນເຮົາໄດ້. ໃນບົດຕໍ່ໄປເຮົາຈະຮຽນເລື່ອງລາຊະກິດຂອງພະວິນຍານ*

*ໃຫ້ທ່ານຈົ່ງເສັງບົດທີ 7 ນີ້ກ່ອນ.*

## ຄໍາຕອບ:

**1** *ກ. ເຢລູຊາເລັມ ຂ. ບົດ 7*

**2** *ກ. ພະວິນຍານບໍລິສຸດ ຂ. ພະວິນຍານບໍລິສຸດ ຄ. ລົມພະຍຸກ້າ*
*ງ. ລີ້ນເປັນຮູບແປວໄຟ ຈ. ປາກພາສາຕ່າງ ໆ ສ. ເພັນເຕຄໍສະເຕ ຊ. 50*
*ຍ. 10*

**3** *ກ. ພະວິນຍານບໍລິສຸດ ຂ. ເຕັມໄປດ້ວຍພະວິນຍານ*

**4** *ກ. ພະວິ່ນຍານບໍລິສຸດ ຂ. ພະເຈົ້າ*

**5** *ພະເຈົ້າ*

**6** *ພະເຈົ້າ*

**7** *ກ. ຜີຄົນຕາຍ ຂ. ພະເຈົ້າ*

**8** *ກ. ພະເຈົ້າ ຂ. ພະວິນຍານບໍລິສຸດ ຄ. ພະເຈົ້າ*

**9** *ກ. 1 ກລທ 2:11 ຍ. ກຈກ 16:6-7 ຂ. 1 ກລທ 12:11 ຈ. ກຈກ 10:19*
*ຄ. 1 ກລທ 2:13 ສ. ກຈກ 5:32 ງ. ກຈກ 13:4 ຊ. ກຈກ 20:28*

**10** *(ເອົາ 5 ປະການຈາກຄໍາຕອບ 7.9)*

**11** *ຖືກ ໝົດ*

**12** *ກ. ບໍ່ໄດ້ ຂ. ບໍ່ໄດ້ ຄ. ບໍ່ໄດ້*

**13** *ໄຟຟ້າ ຖ່ວງດຶງ ເຫຼັກກ້າ (ແລະຢ່າງອື່ນໆ ກໍມີດ້ວຍ)*

**14** *(ເອົາ 5 ປະການ ຈາກຄໍາຖາມ 7.11)*

**15** *ຂອງພະເຈົ້າ*

**16** *ກ. ກຈກ 5:3 ຂ. ກຈກ 5:9 ຄ. ອຟຊ 4:30 ງ. ມລກ 3:29*

**17** *ກ ຖືກ*

**18** *ກ ຄ ຈ ຊ ຖືກ*

**19** *ໄຟຟ້າ ເຫຼັກກ້າ (ຄວາມຖ່ວງດຶງ ຫຼື ອື່ນ ໆ)*

**20** *(ເອົາ 3 ປະການຈາກ4 ປະການຕໍ່ໄປນີ້: ຕົວະ, ທົດລອງ, ເຮັດໃຫ້ເສຍໃຈ ແລະ*
*ໝິ່ນປະມາດ)*

**21** *(ເອົາ 5 ປະການຈາກ 8 ປະການໃນຄໍາຖາມ 7.11)*

**22** *ພະວິນຍານບໍລິສຸດເປັນວິນຍານຂອງພະຜູ້ເປັນເຈົ້າ.*

**23** *ກ. ເອເຟໂຊ1:13 ຂ. ມັດທາຍ 3:11 ຄ. ໂຢຮັນ 7:37-39*
*ງ. ກິດຈະການ 2:1-2*

**24** *ກ. ທີ່ຫຼອມໂລຫະ ຂ. ໄຟ ຄ. ທໍາໃຫ້ບໍລິສຸດ*

**25** *ກ. ໄຟ ຂ. ພະເຢຊູ ຄ. ທໍາໃຫ້ບໍລິສຸດ*

**26** *ໄຟ*

**27** *ກ. ດື່ມ ຂ. ແມ່ນໍ້າອັນມີຊີວິດ ຄ. ພະວິນຍານ*

**ຄໍາຕອບ (ຕໍ່):**

**28** *ນໍ້າອັນປະກອບດ້ວຍຊີວິດ*

**29** *ກ. ຢາກ ຂ. ບໍ່ຢາກອີກ*

**30** *ນໍ້າ... ນໍ້າ*

**31** *ກ. ຖືກ*

**32** *ຊື່ນໃຈ*

**33** *ໄຟ ນໍ້າ*

**34** *ກ. ລົດເດດ ຂ. ລົມພະຍຸກ້າ ຄ. ລົມ*

**35** *ກ. ລົງອອກຈາກພະໂອດ ຂ. ພະວິນຍານບໍລິສຸດ ຄ. ລົມ*

**36** *ລົມ*

**37** *ໄຟ ນໍ້າ ລົມ*

**38** *ຄ ຖືກ*

**39** *ປະກັບ*

**40** *ຂ ຖືກ*

**41** *ປະກັບ*

**42** *ກ. ວັນທີ່ຈະຊົງໄຖ່ໃຫ້ພົ້ນ ຂ. ຜູ້ທີ່ໄວ້ວາງໃຈໃນພະເຢຊູ*

**43** *ໄຟ ນໍ້າ ລົມ ຕາປະທັບ*

**44** *ກ. ລົມ ຂ. ນໍ້າ ຄ. ໄຟ ງ. ຕາປະທັບ*